*Souphanouvong University Journal of Multidisciplinary Research and Development*

*2026, Vol. 12, No. 02, 194-205*

*https://doi.org/10.69692/SUJMRD1202194*

# Developing English Vocabulary Reading Skills Using Phonics Teaching Method at Alounsavath School Luang Prabang District, Luang Prabang Province

**Pathana PHOUTSAVATH[1], Kalaphat KOUNLAXAY[2], Sipaseuth PANFONGPHET[3], Oudom BOUDSIT[4]**

*Department of Program in Education and Development, Faculty of Education, Souphanouvong University, Lao PDR*

[1]**Correspondence:** Pathana PHOUTSAVATH, Department of Program in Education and Development, Faculty of Education, Souphanouvong University

Tel: +856 2059066500 E-mail: pathanaphoutsavath@gmail.com

*Article Info:*

*Submitted: February 23, 2026*

*Revised: April 21, 2026*

*Accepted: April 30, 2026*

## Abstract

Accurate pronunciation of English vocabulary is considered one of the most essential aspects of second language learning, as it serves as the foundation for the development of reading skills. Therefore, this study aimed to examine the level of students' ability in pronouncing English words correctly through the use of the Phonics Method. The sample group consisted of 44 grade 5 students from Alounsavath Primary School, Luang Prabang District, Luang Prabang Province, during the academic year 2025–2026. The research tools included 7 instructional lessons and a reading pronunciation ability test composed of 7 subtests, each containing 5 items.

The results found that 1) The students demonstrated a high level of ability in pronouncing English words after participating in the learning activities that applied the Phonics Method, Overall, their pronunciation ability was rated at a high level, with a mean score of ($\bar{X}$ = 3.06, SD) = 0.28; 2) When considering each aspect individually, it was found that the students demonstrated the highest level of ability in identifying the sounds in words, with a mean score ($\bar{X}$ = 3.38, SD = 0.27). The second highest level was in learning the letter information, with a mean score ($\bar{X}$ = 3.26, SD = 0.42). The aspect with the lowest mean score was blending, with a mean score ($\bar{X}$ = 2.75, SD =1.05); 3) When analyzing the results of the 7 subtests, the mean scores were as follows: Sub-test 1: ($\bar{X}$ = 2.81), Sub-test 2: ($\bar{X}$ = 2.91, SD =), Sub-test 3: ($\bar{X}$= 3.00), Sub-test 4: ($\bar{X}$ = 2.86, SD =), Sub-test 5: ($\bar{X}$ = 3.22, SD =0.44), Sub-test 6: ($\bar{X}$ = 3.31, SD =) and Sub-test 7: ($\bar{X}$ = 3.37, SD =). These results indicate a steady improvement in students' pronunciation ability across the 7 lessons, suggesting that the Phonics Method contributed positively to their learning progress. The study's result demonstrate that students made noticeable progress in developing their ability to pronounce English words accurately.

**Keywords:** Development, Pronunciation Reading, Phonics Methods

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

## 1. ພາກສະເໜີ

ປັດຈຸບັນການພັດທະນາມີລັກສະນະກ້າວກະໂດດ ເຮັດໃຫ້ສັງຄົມໂລກກຳລັງກ້າວເຂົ້າສູ່ສັງຄົມແຫ່ງການຮຽນຮູ້ ເຊິ່ງຄົນໃນສັງຄົມຈຳເປັນຕ້ອງຮຽນຮູ້ຕະຫຼອດເວລາເພື່ອປັບປ່ຽນ ແລະ ກ້າວໃຫ້ທັນຕາມຂະບວນການປ່ຽນແປງຢ່າງໄວວາທາງດ້ານຊີວິດ, ສັງຄົມ ແລະ ວັດທະນະທຳອັນເປັນກົນໄກສັງຄົມແຫ່ງການຮຽນຮູ້, ຈັດລະບົບຂະບວນການສຶກສາທີ່ເໝາະສົມ ແລະ ມີຄຸນນະພາບອັນເປັນປັດໄຈສຳຄັນໃນການພັດທະນາຄຸນນະພາບຂອງປະຊາກອນ, ຄຸນນະພາບຊີວິດ ແລະ ຄວາມສາມາດໃນການແຂ່ງຂັນກັບບັນດາປະເທດທີ່ພວມພັດທະນາ. ສະນັ້ນ, ພາສາອັງກິດຈຶ່ງມີຄວາມສຳຄັນຫຼາຍເພາະມັນໄດ້ເຂົ້າມາມີບົດບາດໃນຊີວິດຂອງປະຊາຊົນລາວ ແລະ ຄົນທົ່ວໂລກໃນການສື່ສານກັນດ້ວຍພາສາອັງກິດ, ໃນທຸກວັນນີ້ແນ່ນອນວ່າປະເທດທີ່ໃຫ້ຄວາມສຳຄັນກັບການຮຽນ-ການສອນພາສາອັງກິດນັ້ນຍ່ອມຮູ້ດີວ່າ ຄົນທີ່ຮຽນຮູ້ພາສາໄດ້ຢ່າງເລິກເຊິ່ງ ສາມາດໃຊ້ພາສາເຂົ້າສູ່ສັງຄົມ ແລະ ວັດທະນະທຳ, ສາມາດໃຊ້ພາສາໄດ້ຢ່າງຖືກຕ້ອງເໝາະສົມກັບສັງຄົມ ແລະ ວັດທະນະທຳ ເນື່ອງຈາກພາສາອັງກິດມີການນຳໃຊ້ໃນທົ່ວໂລກຫຼາຍກວ່າພາສາອື່ນໆ ຈຶ່ງກາຍເປັນພາສາສາກົນທີ່ຕິດຕໍ່ສື່ສານໄດ້ທົ່ວໂລກ; ພາສາອັງກິດເປັນພາສາທີ່ມີບົດບາດສຳຄັນຫຼາຍ ໃນການສື່ສານ, ການສຶກສາ, ການພັດທະນາເສດຖະກິດ ແລະ ສັງຄົມໃນປະເທດລາວ, ມັນຈຶ່ງມີຄວາມຈຳເປັນຢ່າງຍິ່ງເພື່ອໃຫ້ ຄູ-ອາຈານທີ່ສອນພາສາອັງກິດສາມາດນຳໃຊ້ວິທີການສິດສອນ ແລະ ຍຸດທະວິທີທີ່ເໝາະສົມ ແລະ ໄດ້ຮັບຜົນດີເພື່ອຊ່ວຍໃຫ້ນັກຮຽນປະສົບຜົນສຳເລັດຢ່າງໜ້າເພິ່ງພໍໃຈ (Panmanivong, 2020)

ລັດຖະບານລາວໄດ້ໃຫ້ຄວາມສຳຄັນ ແລະ ຄວາມຈຳເປັນໃນການເລັ່ງພັດທະນາຄຸນນະພາບການຮຽນ-ການສອນພາສາອັງກິດຫຼາຍຂຶ້ນ ເຊິ່ງຈະເຫັນໄດ້ຈາກແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດຂອງກະຊວງສຶກສາທິການ ແລະ ກິລາ ເຊິ່ງໄດ້ບັນຈຸຫຼັກສູດພາສາອັງກິດເລີ່ມແຕ່ລະດັບປະຖົມສຶກສາປີທີ 3 ແລະ ທຸກລະດັບເພື່ອໃຫ້ສາມາດສື່ສານກັບນານາຊາດໄດ້ ເພາະພາສາອັງກິດຖືເປັນຂໍຕໍ່ທີ່ຈະເຮັດໃຫ້ເຮົາກ້າວສູ່ຄວາມສຳເລັດ, ເປັນປະຕູເຊື່ອມອອກໄປສູ່ຕ່າງປະເທດໄດ້ ແລະ ຍັງເປັນກຳລັງສຳຄັນໃນການພັດທະນາປະເທດຊາດໃນອະນາຄົດ (ກະຊວງສຶກສາທິການ ແລະ ກິລາ , 2015)

ການຄົ້ນຄວ້າທີ່ຜ່ານມາໄດ້ສະແດງໃຫ້ເຫັນວ່າຜົນໄດ້ຮັບການສິດສອນ ແລະ ການຮຽນຮູ້ໃນ ສປປ ລາວ ມີຄວາມໜ້າພໍໃຈໜ້ອຍກວ່າເມື່ອທຽບໃສ່ກັບປະເທດອື່ນໆໃນອາຊີ ເຊັ່ນ: ປະເທດອິນໂດເນເຊຍ, ປະເທດມາເລເຊຍ ແລະ ປະເທດໄທ. Xaypanya et al. (2017) ໄດ້ກ່າວວ່າ ການຮຽນ-ການສອນພາສາອັງກິດໃນປະເທດລາວອາດມີຜົນມາຈາກຫຼາຍປັດໄຈ. ປັດໄຈໜຶ່ງແມ່ນອາຈານສອນ (lecturers) ແລະ ຄູສອນພາສາອັງກິດຢູ່ປະເທດລາວແມ່ນບໍ່ໄດ້ຮັບການຝຶກອົບຮົມທີ່ດີ; ແຕ່ກົງກັນຂ້າມ ຄູຍັງປະຕິບັດວິທີການສອນແບບເກົ່າ ເຮັດໃຫ້ນັກຮຽນບໍ່ມີຄວາມສົນໃຈ. ດັ່ງນັ້ນ ພວກເຮົາຈຶ່ງເຫັນຜົນໄດ້ຮັບການຮຽນຮູ້ແມ່ນຢູ່ໃນລະດັບຕໍ່າຫຼາຍ Souriyavongsa et al. (2013) ເຊິ່ງໄດ້ເຮັດໃຫ້ເຫັນວ່າຜູ້ຮຽນ EFL ຫຼາຍຄົນຮູ້ສຶກທໍ້ຖອຍໃນຊົ່ວໂມງຮຽນພາສາອັງກິດ ເນື່ອງຈາກຂາດການມີສ່ວນຮ່ວມນຳຄູສອນ. ນອກຈາກນີ້, ຍັງເຮັດໃຫ້ນັກຮຽນຮູ້ສຶກກັງວົນໃນການຮຽນພາສາອັງກິດຍ້ອນຄວາມກົດດັນຈາກເພື່ອນຮຽນຮ່ວມຫ້ອງດ້ວຍກັນ.

ເມື່ອພິຈາລະນາເຖິງວິທີການສອນອ່ານພາສາອັງກິດທີ່ຜ່ານມາ ພົບວ່າວິທີສອນແບບດັ່ງເດີມທີ່ເນັ້ນໃຫ້ຜູ້ຮຽນຈົດຈຳຄຳສັບໂດຍລວມອາດບໍ່ພຽງພໍຕໍ່ການພັດທະນາການອ່ານທີ່ເຂັ້ມແຂງ ວິທີດັ່ງກ່າວອາດສົ່ງຜົນໃຫ້ນັກຮຽນຂາດຄວາມສາມາດໃນການຖອດລະຫັດຄຳສັບທີ່ບໍ່ຄຸ້ນເຄີຍ ແລະ ຕ້ອງໄດ້ອາໄສການຄາດເດົາໃນການອ່ານ ໃນທາງກົງກັນຂ້າມການສອນໂຟນິກເຊິ່ງເນັ້ນຄວາມສຳພັນລະຫວ່າງສຽງ ແລະ ຕົວອັກສອນ ໄດ້ຮັບການຍອມຮັບຢ່າງກວ້າງຂວາງ ແລະ ມີປະສິດທິພາບໃນການພັດທະນາທັກສະການອ່ານຂອງຜູ້ຮຽນ ໂດຍຊ່ວຍໃຫ້ຜູ້ຮຽນສາມາດອ່ານ ແລະ ຂຽນຄຳສັບໄດ້ຢ່າງແມ່ນຍຳ. (Kritima & Jittra, 2019)

ການອ່ານອອກສຽງຄຳສັບພາສາອັງກິດແບບໂຟນິກ (Phonics) ໄດ້ຮັບການຍອມຮັບຢ່າງກວ້າງຂວາງໃນວິຊາການວ່າເປັນແນວທາງທີ່ມີປະສິດທິພາບໃນການພັດທະນາທັກສະການອ່ານຂອງນັກຮຽນ (Buckingham, 2020) ຫຼັກການສຳຄັນຂອງໂຟນິກຄືການເຊື່ອມໂຍງສຽງຂອງຕົວອັກສອນເຂົ້າກັບການອອກສຽງຊ່ວຍໃຫ້ນັກຮຽນສາມາດຖອດລະຫັດຄຳສັບທີ່ບໍ່ຄຸ້ນເຄີຍໄດ້ດ້ວຍຕົນເອງ ເຊິ່ງເປັນທັກສະທີ່ຈະເປັນຢ່າງຍິ່ງໃນການສ້າງຄວາມໝັ້ນໃຈໃນການອ່ານ (National Reading Panel, 2000) ໄດ້ສະຫຼຸບຜົນການວິໄຈຈຳນວນຫຼາຍທີ່ສະແດງໃຫ້ເຫັນວ່າການສອນໂຟນິກເປັນວິທີການທີ່ມີປະສິດທິພາບໃນການພັດທະນາທັກສະການອ່ານຂອງນັກຮຽນ ເຖິງຢ່າງໃດກໍຕາມ ການນຳເອົາວິທີສອນແບບໂຟນິກມາໃຊ້ໃນການຈັດການຮຽນ-ການ

ສອນການອ່ານອອກສຽງຄຳສັບພາສາອັງກິດໃຫ້ເກີດຜົນສຳເລັດສູງສຸດນັ້ນ ຈຳເປັນຕ້ອງມີການກຳນົດເປົ້າໝາຍການຮຽນຮູ້ທີ່ຊັດເຈນ ການເລືອກໃຊ້ສື່ ແລະ ກິດຈະກຳທີ່ເໝາະສົມກັບໄວອາຍຸ ແລະ ລະດັບຄວາມສາມາດຂອງນັກຮຽນ, ການປະເມີນຜົນການຮຽນຮູ້ຢ່າງຕໍ່ເນື່ອງ ແລະ ການພັດທະນາຄູຜູ້ສອນໃຫ້ມີຄວາມຮູ້ຄວາມເຂົ້າໃຈໃນຫຼັກການ ແລະ ວິທີການສອນໂຟນິກຢ່າງແທ້ຈິງ.

ໂຮງຮຽນອາລຸນສະຫວັດ ຈຶ່ງໄດ້ເຫັນຄວາມສຳຄັນຂອງການພັດທະນາທັກສະການອ່ານອອກສຽງຄຳສັບພາສາອັງກິດຂອງນັກຮຽນ ໂດຍສະເພາະຢ່າງຍິ່ງແມ່ນເນັ້ນໃສ່ທັກສະການອ່ານອອກສຽງເຊິ່ງເປັນທັກສະພື້ນຖານທີ່ສຳຄັນຢ່າງຍິ່ງຕໍ່ການຮຽນຮູ້ໃນລະດັບທີ່ສູງຂຶ້ນ. ຢ່າງໃດກໍຕາມ ຈາກຂໍ້ມູນທີ່ເຮົາພົບເຫັນ ແມ່ນເຫັນໄດ້ວ່ານັກຮຽນຍັງມີບັນຫາໃນການອ່ານອອກສຽງຄຳສັບພາສາອັງກິດ ເຊິ່ງມັນໄດ້ສົ່ງຜົນກະທົບຕໍ່ຜົນສຳເລັດທາງການຮຽນບໍ່ພຽງແຕ່ວິຊາພາສາອັງກິດເທົ່ານັ້ນ ແຕ່ຍັງລວມເຖິງວິຊາອື່ນໆນຳ ບັນຫານີ້ມີສາເຫດມາຈາກຫຼາຍປັດໄຈຫຼາຍປະການ ທັງປັດໄຈພາຍໃນ ແລະ ນອກໂຮງຮຽນ ເຊັ່ນ: ສະພາບຄອບຄົວ, ສະພາບການທາງສັງຄົມ ແລະ ໂອກາດໃນການອ່ານ ແລະ ເວົ້າພາສາອັງກິດທີ່ຈຳກັດ ເນື່ອງຈາກຜູ້ຮຽນເວົ້າພາສາອັງກິດໃນສະເພາະແຕ່ຫ້ອງຮຽນເທົ່ານັ້ນ ແລະ ຜູ້ຮຽນບໍ່ໄດ້ຢູ່ໃນສະພາບແວດລ້ອມດ້ວຍການໃຊ້ພາສາອັງກິດໃນການສື່ສານ ຈຶ່ງສົ່ງຜົນໃຫ້ນັກຮຽນຂາດທັກສະການເວົ້າ ແລະ ຂາດຄວາມຄ່ອງແຄ້ວໃນການໃຊ້ພາສາ ສອດຄ່ອງກັບ (Wongsothorn, 2020) ພົບວ່າ ການໃຊ້ວິທີສອນໂຟນິກຊ່ວຍໃຫ້ນັກຮຽນຊັ້ນປະຖົມສຶກສາປີທີ 2 ມີຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດດີຂຶ້ນຫຼາຍ ນອກຈາກນີ້ຜົນການຄົ້ນຄວ້າຂອງ Yaidee (2022) ພົບວ່າ ການໃຊ້ແບບຝຶກທັກສະການອ່ານອອກສຽງແບບໂຟນິກຊ່ວຍພັດທະນາທັກສະການອ່ານອອກສຽງຄຳສັບພາສາອັງກິດຂອງນັກຮຽນ ຊັ້ນປະຖົມສຶກສາປີທີ 4 ໄດ້ຢ່າງມີປະສິດທິພາບ, Chaichit (2020) ພົບວ່າ ແບບຝຶກທັກສະການອ່ານອອກສຽງສະກົດຄຳສັບພາສາອັງກິດ (Phonics) ຊ່ວຍພັດທະນາການອ່ານຂອງນັກຮຽນຊັ້ນປະຖົມສຶກສາປີທີ 2 ໄດ້ຫຼາຍ ອີກທັງ Biru (2024) ທີ່ໄດ້ສຶກສາກ່ຽວກັບການພັດທະນາທັກສະການອ່ານອອກສຽງຄຳສັບພາສາອັງກິດ ໂດຍໃຊ້ແບບຝຶກທັກສະການອ່ານອອກສຽງແບບໂຟນິກຂອງນັກຮຽນຊັ້ນປະຖົມສຶກສາປີທີ 4 ຜົນການວິໄຈປາກົດວ່າ ຄະແນນການອ່ານອອກສຽງຄາສັບພາສາອັງກິດຫຼັງຮຽນສູງກວ່າກ່ອນຮຽນດ້ວຍຄວາມສຳຄັນທາງສະຖິຕິ ລວມເຖິງ Niyomphan (2023) ທີ່ໄດ້ເຮັດການວິໄຈກ່ຽວກັບການສອນໂຟນິກເພື່ອສົ່ງເສີມທັກສະການອ່ານອອກສຽງຄຳສັບພາສາອັງກິດຂອງນັກຮຽນຊັ້ນປະຖົມສຶກສາປີທີ 3 ຜົນວິໄຈໄດ້ສະແດງໃຫ້ເຫັນວ່າ ນັກຮຽນມີທັກສະການອ່ານອອກສຽງຄຳສັບພາສາອັງກິດຫຼັງຈາກການສອນດ້ວຍວິທີສອນແບບໂຟນິກສູງກວ່າກ່ອນຮຽນ ດ້ວຍຄວາມສຳຄັນທາງສະຖິຕິ ໃນຂະນະດຽວກັນ National Reading Panel (2000) ເຊິ່ງໄດ້ສະຫຼຸບຜົນການວິໄຈຈຳນວນຫຼາຍ ທີ່ສະແດງໃຫ້ເຫັນວ່າ ການສອນໂຟນິກເປັນວິທີສອນທີ່ມີປະສິດທິພາບໃນການພັດທະນາທັກສະການອ່ານຂອງເດັກ ນອກຈາກນີ້ (Trujillo-Ramos, 2025) ການສອນ Phonics ມີຄວາມຈຳເປັນໃນການສອນການອ່ານອອກສຽງໃຫ້ໄດ້ຢ່າງຈະແຈ້ງ, ການສະກົດຄຳພາສາອັງກິດຈຳເປັນຕ້ອງມີການສອນໃຫ້ຊັດເຈນ ແລະ ການສອນໂຟນິກສັງເຄາະ (Synthetic Phonics) ທີ່ເປັນການອະທິບາຍຈຸດກຳເນີດຂອງສຽງ, ຕຳແໜ່ງທີ່ເກີດສຽງ, ລັກສະນະ ແລະ ວິທີການໃນການອອກສຽງ ໄດ້ໃນບໍລິບົດທີ່ຫຼາກຫຼາຍ (Grabe & Stoller, 2019) ໄດ້ໃຫ້ຄວາມສຳຄັນຂອງການສອນໂຟນິກໃນການຮຽນ-ການສອນການອ່ານພາສາທີສອງ.

ຈາກເຫດຜົນ ແລະ ຄວາມສຳຄັນຂອງບັນຫາດັ່ງກ່າວທີ່ຜູ້ສຶກສາ ແລະ ຄົ້ນຄວ້າເອກະສານຕ່າງໆ ລວມທັງບົດຄົ້ນຄວ້າທີ່ກ່ຽວຂ້ອງກັບວິທີການສິດສອນແບບ Phonics. ດັ່ງນັ້ນ, ຜູ້ສຶກສາຈຶ່ງມີຄວາມສົນໃຈທີ່ຈະສຶກສາໃນຫົວຂໍ້: ການພັດທະນາການອ່ານອອກສຽງຄຳສັບພາສາອັງກິດ ໂດຍນຳໃຊ້ວິທີການສອນແບບໂຟນິກ ທີ່ໂຮງຮຽນອາລຸນສະຫວັດ, ນະຄອນຫຼວງພະບາງ, ແຂວງຫຼວງພະບາງ ສົກສຶກສາ 2025-2026 ເພື່ອພັດທະນາການຮຽນ-ການສອນທີ່ເໝາະສົມຕໍ່ກັບນັກຮຽນຊັ້ນປະຖົມສຶກສາປີທີ 5 ໂດຍມຸ້ງເນັ້ນການພັດທະນາທັກສະການອ່ານຂອງນັກຮຽນທີ່ສອດຄ່ອງກັບຄວາມຕ້ອງການ ແລະ ສັກກະຍາພາບຂອງນັກຮຽນໃນລະດັບຊັ້ນປະຖົມສຶກສາ ທີ່ເປັນຊ່ວງໄວສຳຄັນໃນການວາງຮາກຖານທັກສະພາສາອັງກິດ ແລະ ອີກປະການໜຶ່ງ ການສຶກສາຄັ້ງນີ້ຈະເປັນແນວທາງໜຶ່ງໃຫ້ແກ່ຄູສອນໄດ້ເຫັນສິ່ງທ້າທາຍແນວໃດເພື່ອພັດທະນາການຮຽນ-ການສອນດັ່ງກ່າວເພື່ອໄປປະຍຸກໃຊ້ ແລະ ພັດທະນາການສອນແບບ Phonics ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນໃນອະນາຄົດ. ສະນັ້ນ, ຜູ້ຄົ້ນຄວ້າຈຶ່ງກຳນົດຈຸດປະສົງເພື່ອປະເມີນຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດ ສຳລັບນັກຮຽນຊັ້ນປະຖົມສຶກສາ ປີທີ 5 ຫຼັງໄດ້ຮັບ

ການຈັດກິດຈະກຳການຮຽນ-ການສອນໂດຍນຳໃຊ້ວິທີສອນແບບໂຟນິກ (Phonics Method). ກຸ່ມຕົວຢ່າງໄດ້ແກ່ນັກຮຽນຊັ້ນປະຖົມສຶກສາ ປີທີ 5 ທີ່ໂຮງຮຽນອາລຸນ ສະຫວັດ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ສົກຮຽນ 2025-2026.

## 2. ອຸປະກອນ ແລະ ວິທີການ

2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ເຂົ້າໃນການຄົ້ນຄວ້າໃນຄັ້ງນີ້ ໄດ້ແກ່ນັກຮຽນຊັ້ນປະຖົມສຶກສາປີທີ 5 ໂຮງຮຽນອາລຸນ ສະຫວັດ, ນະຄອນຫຼວງພະບາງ, ແຂວງຫຼວງພະບາງ ຈຳນວນ 44 ຄົນ.

ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການຄົ້ນຄວ້າໃນຄັ້ງນີ້ ຜູ້ຄົ້ນຄວ້າໄດ້ອີງຕາມຕາຕະລາງສຳເລັດຮູບຂອງ ເຄຣຊີ ແລະ ມໍແກນ (Krejcie & Morgan, 1970) ທີ່ຢູ່ໃນລະດັບຄວາມຄາດເຄື່ອນທີ່ຍອມຮັບໄດ້ 0.5 ແລະ ລະດັບຄວາມເຊື່ອໝັ້ນ 95% ໂດຍໄດ້ກຸ່ມຕົວຢ່າງທັງໝົດ ຈຳນວນ 44 ຄົນ ທີ່ໂຮງຮຽນອາລຸນສະຫວັດ, ນະຄອນຫຼວງພະບາງ, ແຂວງຫຼວງພະບາງ ປະຈຳສົກຮຽນ 2025-2026.

2.2 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

2.2.1. ບົດສອນ

ຜູ້ຄົ້ນຄ້ວາໄດ້ສ້າງບົດສອນຂຶ້ນຕາມ 5 ຂັ້ນຕອນຂອງວິທີສອນໂຟນິກ ຄື: 1) ການສອນສຽງຂອງຕົວອັກສອນ, 2) ການຮຽນຮູ້ກ່ຽວກັບຕົວອັກສອນ, 3) ການປະສົມຄຳ, 4) ການແຍກສຽງຂອງຕົວອັກສອນ ແລະ 5) ການສອນ Tricky words. ໃນການຈັດການຮຽນ-ການສອນໄດ້ໃຊ້ກິດຈະກຳການຟັງສຽງ, ຂຽນເປັນຫຼັກ ແລະ ໃຫ້ນັກຮຽນຝຶກການອອກສຽງເປັນບຸກຄົນ, ເປັນຄູ່ຄຽງຄູ່ໄປກັບຂັ້ນຕອນຂອງການຮຽນອ່ານອອກສຽງຂອງ Jolly Phonics ໂດຍຫົວຂໍ້ບົດສອນແບ່ງອອກເປັນ 7 ກຸ່ມ ເຊິ່ງມີລາຍລະອຽດດັ່ງນີ້:

| ບົດສອນ | ເນື້ອໃນບົດສອນ | ເວລາທີ່ໃຊ້ສອນ |
|---|---|---|
| ບົດທີ 1 | ກຸ່ມທີ່ 1 (s, a, t, i, p, n) | 90 ນາທີ |
| ບົດທີ 2 | ກຸ່ມທີ່ 2 (c, k, e, h, r , m, d) | 90 ນາທີ |
| ບົດທີ 3 | ກຸ່ມທີ່ 3 (g, o, u, l, f, d) | 90 ນາທີ |
| ບົດທີ 4 | ກຸ່ມທີ່ 4 (ai, j, oa, ie, ee, or) | 90 ນາທີ |
| ບົດທີ 5 | ກຸ່ມທີ່ 5 (z, w, ng, v, oo, oo) | 90 ນາທີ |
| ບົດທີ 6 | ກຸ່ມທີ່ 6 (y, x, ch, sh , th, th) | 90 ນາທີ |
| ບົດທີ 7 | ກຸ່ມທີ່ 7 (qu, ou, oi, ue, er, ar) | 90 ນາທີ |

2.2.2 ແບບທົດສອບວັດຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດ.

ເປັນແບບທົດສອບຍ່ອຍເປັນລາຍບຸກຄົນຈຳນວນ 7 ຄັ້ງ, ຄັ້ງລະ 5 ຂໍ້, ເຊິ່ງປະເມີນຄວາມສາມາດຕາມ 5 ຂັ້ນຕອນຂອງຮູບແບບໂຟນິກ ມີເກນການໃຫ້ຄະແນນຕາມແບບ Scoring Rubrics ໂດຍກຳນົດເກນການໃຫ້ຄະແນນດັ່ງນີ້:

- ກອດໃຫ້ຄະແນນ 4 ຄວາມໝາຍ ເກັ່ງຫຼາຍ
- ກອດໃຫ້ຄະແນນ 3 ຄວາມໝາຍ ເກັ່ງ
- ກອດໃຫ້ຄະແນນ 2 ຄວາມໝາຍ ກາງ
- ກອດໃຫ້ຄະແນນ 1 ຄວາມໝາຍ ອ່ອນ (ປັບປຸງຄືນ)

ເກນການປະເມີນຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດ ໂດຍໃຊ້ວິທີສອນແບບໂຟນິກ ມີດັ່ງນີ້:

| ລາຍການປະເມີນ | ເກນການປະເມີນ | | | |
|---|---|---|---|---|
| | 4 ຄະແນນ (ເກັ່ງຫຼາຍ) | 3 ຄະແນນ (ເກັ່ງ) | 2 ຄະແນນ (ກາງ) | 1 ຄະແນນ (ອ່ອນ/ປັບປຸງຄືນ) |
| 1. ການຮຽນຮູ້ສຽງພະຍັນຊະນະ (Learning the Letter Sound) | ສາມາດອ່ານອອກສຽງຕົວອັກສອນໄດ້ຖືກຕ້ອງ ແລະ ຊັດເຈນທຸກຕົວ | ສາມາດອ່ານໄດ້ຖືກສ່ວນໃຫ່ຍ | ອ່ານຜິດຫຼາຍຕົວ | ບໍ່ສາມາດອ່ານອອກສຽງໄດ້ |
| 2. ການຮຽນຮູ້ກ່ຽວກັບຕົວອັກສອນ (Learning the Letter Information) | ສາມາດຮູ້ຈັກຊື່ຕົວອັກສອນ ແລະ ສຽງຂອງມັນໄດ້ຢ່າງຖືກຕ້ອງ ແລະ ຊັດເຈນ | ຮູ້ຈັກເກືອບທັງໝົດ | ຮູ້ຈັກໄດ້ພຽງບາງຕົວ | ບໍ່ຮູ້ຈັກຕົວອັກສອນ ແລະ ບໍ່ສາມາດອ່ານອອກສຽງໄດ້ |

| | | | | |
|---|---|---|---|---|
| 3. ການປະສົມຄຳ (Blending) | ສາມາດນຳສຽງມາປະສົມເພື່ອອ່ານຄຳສັບໄດ້ຢ່າງຖືກຕ້ອງ ແລະ ຊັດເຈນ | ສາມາດປະສົມສຽງໄດ້ແຕ່ຍັງບໍ່ຊັດເຈນ | ປະສົມສຽງໄດ້ບາງຄຳ | ບໍ່ສາມາດປະສົມສຽງໄດ້ |
| 4. ການແຍກສຽງຄຳ (Identifying the Sounds in Words) | ສາມາດຈຳແນກສຽງຕົ້ນ–ກາງ–ທ້າຍໃນຄຳສັບໄດ້ຖືກຕ້ອງ | ສາມາດຈຳແນກໄດ້ເກືອບທັງໝົດ | ຈຳແນກໄດ້ພຽງບາງສ່ວນ | ບໍ່ສາມາດຈຳແນກສຽງໄດ້ |
| 5. ຄຳທີ່ບໍ່ເປັນໄປຕາມກົດ (Tricky Words) | ອ່ານ Tricky words ໄດ້ຖືກຕ້ອງ ແລະ ຈື່ຈຳໄດ້ດີ | ອ່ານໄດ້ແຕ່ຜິດນ້ອຍ | ອ່ານຜິດຫຼາຍ | ບໍ່ສາມາດອ່ານໄດ້ |

ແປຄວາມໝາຍຄ່າສະເລ່ຍລະດັບຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດຂອງນັກຮຽນ

| ຄ່າສະເລ່ຍ | ຄວາມໝາຍ |
|---|---|
| 3.26-4.00 | ມີຄວາມສາມາດການອ່ານອອກສຽງຄຳສັບຢູ່ໃນລະດັບເກັ່ງຫຼາຍ |
| 2.51-3.25 | ມີຄວາມສາມາດການອ່ານອອກສຽງຄຳສັບຢູ່ໃນລະດັບເກັ່ງ |
| 1.76-2.50 | ມີຄວາມສາມາດການອ່ານອອກສຽງຄຳສັບຢູ່ໃນລະດັບກາງ |
| 1.00-1.75 | ມີຄວາມສາມາດການອ່ານອອກສຽງຄຳສັບຢູ່ໃນລະດັບອ່ອນ |

2.3. ການຫາຄຸນນະພາບຂອງເຄື່ອງມື

- ຜູ້ຄົ້ນຄວ້າໄດ້ນຳບົດສອນທີ່ສ້າງຂຶ້ນ ສະເໜີຜູ້ຊ່ຽວຊານ ຈຳນວນ 3ທ່ານ ເພື່ອກວດສອບຄວາມຖືກຕ້ອງ, ຄວາມເໝາະສົມ ແລະ ຄວາມສອດຄ່ອງ ໂດຍໃຊ້ວິທີການຫາຄ່າຄວາມທ່ຽງຕົງທາງດ້ານເນື້ອໃນ (Content Validity) ໂດຍຫາຄ່າດັດຊະນີຄວາມສອດຄ່ອງ (IOC) ເຊິ່ງມີຄ່າຢູ່ລະຫວ່າງ 0.67-1.00 ພົບວ່າບົດສອນທີ່ໄດ້ສ້າງຂຶ້ນແມ່ນເໝາະສົມຫຼາຍທີ່ສຸດ.

- ນຳແບບທົດສອບຍ່ອຍທີ່ໃຊ້ວັດຄວາມສາມາດທີ່ສ້າງຂຶ້ນໄປ ຜ່ານຜູ້ຊ່ຽວຊານ ເພື່ອກວດຄຸນນະພາບ ໂດຍໄດ້ຄ່າດັດນີຄວາມສອດຄ່ອງລະຫວ່າງແບບທົດສອບກັບຈຸດປະສົງ (IOC) ຕັ້ງແຕ່ 0.67-1.00 ແລະ ນຳແບບທົດສອບໄປທົດລອງ ໂດຍໄດ້ຄ່າຄວາມຍາກງ່າຍຕັ້ງແຕ່ 0.40 - 0.45, ໄດ້ຄ່າອຳນາດຈຳແນກຕັ້ງແຕ່ 0.30 - 0.35 ແລະ ໄດ້ຄ່າຄວາມເຊື່ອໝັ້ນສຳລັບແບບທົດສອບຍ່ອຍທັງສະບັບເທົ່າກັບ 0.87 ໂດຍໃຊ້ສູດການຫາຄ່າສຳປະສິດຄວາມເຊື່ອໝັ້ນຂອງຄອນບັດ (Cronbach's Alpha Coefficient)

2.4. ແບບແຜນການຄົ້ນຄວ້າ

ການຄົ້ນຄ້ວາຄັ້ງນີ້ເປັນການຄົ້ນຄວ້າໃນຮູບແບບການວິໄຈໃນຫ້ອງຮຽນ (Classroom Action Research) ເຊິ່ງຜູ້ຄົ້ນຄວ້າໄດ້ດຳເນີນການທົດລອງໂດຍນຳໃຊ້ແຜນການທົດລອງແບບແຜນການຄົ້ນຄວ້າແບບກຸ່ມດຽວ (The One – Shot Case Design) (Campbell & Stanley, 1963)

| ທົດລອງ (Treatment) | ທົດສອບຫຼັງ (post-test) |
|---|---|
| X | $O_2$ |

**X** ແທນ ການຈັດການຮຽນ-ການສອນ ໂດຍນຳໃຊ້ຮູບແບບໂຟນິກ

$O_2$ ແທນ ຜົນການຮຽນຂອງນັກຮຽນ

2.5. ການເກັບຮວມຮວມຂໍ້ມູນ

1) ກຽມບົດສອນ ແລະ ແບບທົດສອບຍ່ອຍທີ່ໃຊ້ວັດຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດຫຼັງຈາກຮຽນຈົບບົດເລື່ອງນັ້ນ. ຕິດຕໍ່ນັດໝາຍອັນເວລາກັບນັກຮຽນທີ່ເປັນກຸ່ມຕົວຢ່າງເພື່ອເກັບຂໍ້ມູນ ແຈ້ງຈຸດປະສົງຂອງການຮຽນ ແລະ ອະທິບາຍ ຊີ້ແຈງໃນການຮຽນການສອນ ແລະ ການທົດສອບໃຫ້ນັກຮຽນເຂົ້າໃຈ ແລະ ເຫັນໄດ້ຄວາມສຳຄັນ ແລະ ຕັ້ງໃຈໃນການເຮັດແບບທົດສອບຢ່າງເຕັມຄວາມສາມາດ.

2) ດຳເນີນການຈັດກິດຈະກຳການຮຽນ-ການສອນ ໂດຍໃຊ້ຮູບແບບວິທີສອນໂຟນິກໃຫ້ສຳເລັດຕາມແຜນທີ່ກຳນົດ.

3) ທຸກຄັ້ງເມື່ອສິ້ນສຸດການຮຽນການສອນໃນເລື່ອງ ຜູ້ຄົ້ນຄວ້າໄດ້ນັດໝາຍທົດສອບຍ່ອຍກັບນັກຮຽນທີ່ແມ່ນກຸ່ມຕົວຢ່າງ ໂດຍໃຊ້ເວລານອກຊົ່ວໂມງຮຽນທົດ

ສອບຍ່ອຍປະມານ 2 ນາທີຕໍ່ນັກຮຽນໜຶ່ງຄົນ ແບບທົດສອບວັດຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດ ປະກອບມີຈຳນວນ 5 ຂໍ້ ແລະ ນຳແບບທົດສອບຍ່ອຍວັດຄວາມສາມາດຈຳນວນ 7 ຊຸດໄປດຳເນີນການວິເຄາະ ແລະ ແປຜົນໂດຍທຽບໃສ່ເກນ.

2.6. ການວິເຄາະຂໍ້ມູນ

ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນຄັ້ງນີ້ແມ່ນນຳໃຊ້ຄ່າສະຖິຕິພື້ນຖານ ໄດ້ແກ່: ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເປັນຫຼັກໃນການວິເຄາະເພື່ອປະເມີນຄວາມສາມາດຂອງນັກຮຽນທີ່ສະແດງອອກຜ່ານຂະບວນການຝຶກຊ້ອມການອ່ານອອກສຽງຄຳສັບພາສາອັງກິດຫຼັງໄດ້ຮັບການຈັດກິດຈະກຳການຮຽນ-ການສອນໂດຍນຳໃຊ້ວິທີສອນແບບໂຟນິກ ຈາກການເຮັດແບບທົດສອບຍ່ອຍຈຳນວນ 7 ຄັ້ງ ໂດຍໃຊ້ໂປຼແກຣມ SPSS Version 21 ວິເຄາະຂໍ້ມູນດັ່ງກ່າວ.

## 3. ຜົນໄດ້ຮັບ

ຈາກຕາຕະລາງ 1 ສະແດງໃຫ້ເຫັນເຖິງລະດັບຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດໃນແຕ່ລະຂັ້ນຕອນ (ໃນ 5 ຂັ້ນຕອນຂອງວິທີສອນໂຟນິກ) ແລະ ການທົດສອບຍ່ອຍໃນແຕ່ລະຄັ້ງ (ທັງໝົດ 7 ຄັ້ງ) ມີລາຍລະອຽດ ດັ່ງນີ້:

1) ນັກຮຽນມີຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດຫຼັງໄດ້ຮັບການຈັດກິດຈະກຳການຮຽນ-ການສອນໂດຍນຳໃຊ້ວິທີສອນແບບໂຟນິກໂດຍພາບລວມຢູ່ໃນລະດັບເກັ່ງ ($\bar{X}$=3.06, SD=0.28).

2) ເມື່ອພິຈາລະນາເປັນລາຍດ້ານ ພົບວ່າ: ນັກຮຽນມີຄວາມສາມາດອ່ານອອກສຽງຄຳສັບພາສາອັງກິດໃນລະດັບສູງສຸດແມ່ນຂັ້ນຕອນທີ 4 ການແຍກສຽງຄຳ (Identifying the sounds in words) ຢູ່ໃນລະດັບເກັ່ງຫຼາຍ ($\bar{X}$=3.38, SD=0.27) ຮອງລົງມາແມ່ນຂັ້ນຕອນທີ 2 ການຮຽນຮູ້ກ່ຽວກັບຕົວອັກສອນ (Learning the letter information) ເຊິ່ງນັກຮຽນມີຄວາມສາມາດອ່ານອອກສຽງຄຳສັບຢູ່ໃນລະດັບເກັ່ງຫຼາຍ ($\bar{X}$ =3.26, SD=0.27) ສ່ວນຂັ້ນຕອນທີ່ມີຄ່າສະເລ່ຍຕໍ່າສຸດແມ່ນຂັ້ນທີ 3 ການປະສົມຄຳ (Blending) ນັກຮຽນມີຄວາມສາມາດອ່ານອອກສຽງຄຳສັບຢູ່ໃນລະດັບເກັ່ງ ເຊິ່ງມີຄ່າຢູ່ທີ ($\bar{X}$ = 2.75, SD = 1.05)

3) ເມື່ອນຳຂໍ້ມູນມາປຽບທຽບລະດັບຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດໃນແຕ່ລະຄັ້ງຂອງການທົດສອບຍ່ອຍຄັ້ງທີ: 1, 2, 3, 4, 5, 6 ແລະ 7 ໄດ້ຄະແນນສະເລ່ຍແມ່ນ: $\bar{X}$=2.81, $\bar{X}$=2.91, $\bar{X}$=3.00, $\bar{X}$=2.86, $\bar{X}$=3.22, $\bar{X}$=3.31, $\bar{X}$=3.37 ຕາມລຳດັບສາມາດເຫັນວ່ານັກຮຽນມີທ່າອ່ຽງດີຂຶ້ນໂດຍລວມ ແລະ ດີຂຶ້ນໃນເກືອບທຸກຂັ້ນຕອນ (ຮູບທີ1)

## 4. ວິພາກຜົນ

ຈາກຜົນການຄົ້ນຄວ້າພາຍໃຕ້ຫົວຂໍ້ ການພັດທະນາການອ່ານອອກສຽງຄຳສັບພາສາອັງກິດດ້ວຍວິທີສອນແບບໂຟນິກ ສຳລັບນັກຮຽນຊັ້ນປະຖົມສຶກສາປີທີ5 ໂຮງຮຽນອາລຸນສະຫວັດ, ນະຄອນຫຼວງພະບາງ, ແຂວງຫຼວງພະບາງ ຈຳນວນ 44 ຄົນ ໂດຍພາບລວມພົບວ່າ ນັກຮຽນມີຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດໃນແຕ່ລະຂັ້ນຕອນແມ່ນຈັດຢູ່ໃນລະດັບເກັ່ງ. ຂັ້ນຕອນທີ່ມີຄ່າສະເລ່ຍສູງສຸດແມ່ນຂັ້ນຕອນທີທີ 4 ການແຍກສຽງຄຳ (Identifying the sounds in words), ສ່ວນຂັ້ນຕອນທີ່ມີຄ່າສະເລ່ຍຕໍ່າສຸດແມ່ນຂັ້ນຕອນທີ 3 ການປະສົມຄຳ (Blending). ຖ້າເບິ່ງພາບລວມ ໂດຍສົມທຽບລະດັບຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດຂອງນັກຮຽນ ຈາກການທົດສອບຍ່ອຍທັງໝົດ 7 ຄັ້ງເຫັນວ່າມີທ່າອ່ຽງດີຂຶ້ນ.

ຈາກຄະແນນສະເລ່ຍຕໍ່າທີ່ສຸດເຊິ່ງທຽບໃສ່ເກນແມ່ນມີລະດັບຄວາມສາມາດຢູ່ໃນລະດັບເກັ່ງ ແມ່ນຂັ້ນຕອນການການປະສົມຄຳ (Blending) ເປັນຂັ້ນຕອນດຽວທີ່ລະດັບຄະແນນຂ້ອນຂ້າງຄົງທີ່ ຫຼື ຫຼຸດລົງ ໂດຍບໍ່ມີທ່າອ່ຽງເພີ່ມຂຶ້ນໃນໄລຍະການທົດສອບຍ່ອຍ 7 ຄັ້ງ. ຈາກຄະແນນສະເລ່ຍການທົດສອບວັດຄວາມສາມາດການອ່ານອອກສຽງຄຳສັບພາສາອັງກິດໃນຄັ້ງທີ 1, 2, 3, 4, 5, 6, 7 ໄດ້ຄະແນນສະເລ່ຍ: 2.81, 2.91, 3.00, 2.86, 3.22, 3.31, 3.37 ຖ້າລຽງເບິ່ງຕາມລຳດັບເຫັນວ່າ ການທົດສອບຄັ້ງທີ 1, 2, 3, 5, 6, 7 ມີທ່າອ່ຽງພັດທະນາຂຶ້ນຕາມລຳດັບ , ແຕ່ເຫັນວ່າການທົດສອບຄັ້ງທີ 4 ມີຄະແນນສະເລ່ຍຫຼຸດລົງເລັກນ້ອຍອາດເປັນເພາະເນື້ອໃນບົດຮຽນຄັ້ງນີ້ຍາກ ແລະມີວິທີການຈື່ຈຳການອ່ານຍາກຂຶ້ນເນື່ອງຈາກມີຫຼາຍສຽງໃນຄຳດຽວ, ແຕ່ຫາກພິຈາລະນາຄະແນນສະເລ່ຍໂດຍລວມຈະເຫັນວ່ານັກຮຽນໄດ້ຮັບການພັດທະນາຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດເພີ່ມຂຶ້ນຫຼາຍເຊິ່ງສອດຄ່ອງກັບຜົນການສຶກສາຂອງ Mailiang et al. (2019) ໄດ້ສຶກສາຜົນສຳເລັດການຈັດການຮຽນຮູ້ໂດຍໃຊ້ວິທີສອນໂຟນິກ ເພື່ອພັດທະນາຄວາມສາມາດໃນການອ່ານອອກສຽງ ແລະ ຈື່ຈຳຄວາມໝາຍຂອງຄຳສັບພາສາອັງກິດຂອງນັກຮຽນຊັ້ນປະຖົມສຶກສາປີທີ 5 ພົບວ່າຄວາມສາມາດ

ໃນການອອກສຽງພາສາອັງກິດ ແລະ ຄວາມສາມາດໃນການຈື່ຈໍາຄໍາສັບພາສາອັງກິດຂອງນັກຮຽນຊັ້ນປະຖົມສຶກສາປີທີ 5 ຫຼັງການສອນສູງກວ່າກ່ອນການສອນ ດ້ວຍຄວາມສໍາຄັນທາງສະຖິຕິໃນລະດັບ .05 Souriyamonthol et la. (2018) ໄດ້ວິໄຈເລື່ອງການສອນແບບໂຟນິກເພື່ອສົ່ງເສີມການອ່ານອອກສຽງ ແລະ ຄວາມຮູ້ຄໍາສັບຂອງພາສາອັງກິດຂອງນັກຮຽນຊັ້ນປະຖົມສຶກສາປີທີ 1ໃນໂຮງຮຽນແມ່ລະນາ ທີ່ກໍາລັງສຶກສາຢູ່ໃນພາກຮຽນທີ 2 ພົບວ່າ ນັກຮຽນສາມາດອອກສຽງ ແລະ ສະກົດຄໍາສັບໄດ້ຢ່າງຖືກຕ້ອງ ແລະ ຄວາມສາມາດດ້ານການອ່ານພາສາອັງກິດຂອງນັກຮຽນສູງກວ່າກ່ອນຮຽນທຸກຄົນ.

ທັງນີ້ ອາດເນື່ອງມາຈາກການຈັດການຮຽນ-ການສອນການອ່ານອອກສຽງຄໍາສັບພາສາອັງກິດ ໂດຍນໍາໃຊ້ວິທີສອນແບບໂຟນິກ ຕາມແນວທາງ Jolly Phonics ຂອງ Sue Lloyd ມີຫຼັກການ 5 ຂັ້ນຕອນ ເຊິ່ງໃນແຕ່ລະຂັ້ນຕອນຂອງການຈັດການຮຽນຊ່ວຍໃຫ້ນັກຮຽນມີຄວາມກ້າວໜ້າດ້ານການອ່ານອອກສຽງຄໍາສັບຢ່າງຊັດເຈນ ເນື່ອງຈາກວິທີສອນດັ່ງກ່າວເປັນການສອນທີ່ມີຂັ້ນຕອນຊັດເຈນ ແລະ ສອດຄ່ອງກັບການພັດທະນາທັກສະການອ່ານພື້ນຖານ ສາມາດອະທິບາຍຜົນໄດ້ເປັນລາຍດ້ານ ດັ່ງນີ້:

1) ດ້ານການຮຽນຮູ້ສຽງພະຍັນຊະນະ (Learning the Letter Sound): ເປັນການຮຽນຮູ້ສຽງພາສາອັງກິດຈໍານວນ 42 ສຽງ ອອກເປັນ 7 ກຸ່ມ ໂດຍບໍ່ໄດ້ລຽງລໍາດັບຕາມຕົວອັກສອນ. ຜົນການຈັດການຮຽນ-ການສອນພົບວ່າ ນັກຮຽນສາມາດຈໍາ ແລະ ອ່ານອອກສຽງຕົວອັກສອນໄດ້ຖືກຕ້ອງຂຶ້ນ ເນື່ອງຈາກການສອນໂຟນິກໄດ້ເນັ້ນໃຫ້ນັກຮຽນເຂົ້າໃຈ “ສຽງ” ຂອງຕົວອັກສອນ ບໍ່ແມ່ນພຽງແຕ່ຈື່ຈໍາຊື່ຕົວອັກສອນເທົ່ານັ້ນ ຈຶ່ງຊ່ວຍວາງພື້ນຖານທີ່ດີໃຫ້ແກ່ການອ່ານຄໍາສັບໃນຂັ້ນຕໍ່ໄປ ແຕ່ກໍ່ມີນັກຮຽນຈໍານວນໜ້ອຍທີ່ຍັງບໍ່ສາມາດຈື່ຈໍາສຽງຕົວອັກສອນໄດ້ໝົດ ເຊິ່ງຜົນການສຶກສານີ້ສອດຄ່ອງກັບຜົນການຄົ້ນຄວ້າຂອງ Adam (1990) ທີ່ພົບວ່າ ການສອນໂຟນິກຢ່າງເປັນລະບົບຊ່ວຍໃຫ້ນັກຮຽນຈື່ຈໍາ ແລະ ອ່ານອອກສຽງຕົວອັກສອນໄດ້ຖືກຕ້ອງຂຶ້ນ.

2) ດ້ານການຮຽນຮູ້ກ່ຽວກັບຕົວອັກສອນ (Learning the Letter Information): ເປັນການຝຶກຄວບຄູ່ໄປກັບການຂຽນຕົວອັກສອນພາສາອັງກິດ.ຜົນການສຶກສາສະແດງໃຫ້ເຫັນວ່າ ນັກຮຽນມີຄວາມເຂົ້າໃຈຄວາມສໍາພັນລະຫວ່າງຕົວອັກສອນ ແລະ ສຽງຂອງມັນໄດ້ດີຂຶ້ນ ເຊິ່ງຊ່ວຍຫຼຸດຄວາມສັບສົນໃນການອ່ານຄໍາສັບ ແລະ ຊ່ວຍໃຫ້ນັກຮຽນສາມາດຄາດເດົາການອອກສຽງຂອງຄໍາສັບໃໝ່ໆ ໄດ້ດ້ວຍຕົນເອງ ຜົນການສຶກສານີ້ມີຄວາມສອດຄ່ອງຢ່າງຊັດເຈນກັບ Ehri (2005)

3) ດ້ານການປະສົມສຽງ (Blending): ໃນຂັ້ນນີ້ຈະຊ່ວຍໃຫ້ນັກຮຽນສາມາດນໍາສຽງຕົວອັກສອນແຕ່ລະຕົວມາປະສົມເປັນຄໍາສັບໄດ້ຢ່າງຖືກຕ້ອງ ຜົນທີ່ໄດ້ຮັບສະແດງວ່າ ນັກຮຽນອ່ານຄໍາສັບໄດ້ຄ່ອງແຄ້ວ ແລະ ມີຄວາມໝັ້ນໃຈໃນການອ່ານອອກສຽງ ເຊິ່ງເປັນທັກສະສໍາຄັນຂອງການອ່ານພາສາອັງກິດ ແຕ່ກໍ່ຍັງມີນັກຮຽນຈໍານວນໜຶ່ງຍັງບໍ່ສາມາດປະສົມສຽງໄດ້ (Ahmad & Yunas, 2019)

4) ດ້ານການແຍກສຽງຄໍາ (Identifying the Sounds in Words): ໃນຂັ້ນຕອນນີ້ນັກຮຽນຈະໄດ້ແຍກສຽງພະຍັນຊະນະ ແລະ ສະຫຼະຈາກຄໍາສັບ ເຊິ່ງຜົນການຮຽນຮູ້ພົບວ່າ ນັກຮຽນສາມາດຈໍາແນກສຽງຕົ້ນ ສຽງກາງ ແລະ ສຽງທ້າຍໃນຄໍາສັບໄດ້ດີຂຶ້ນ ທັກສະນີ້ຊ່ວຍໃຫ້ນັກຮຽນອ່ານຄໍາສັບໄດ້ຖືກຕ້ອງຫຼາຍຂຶ້ນ ແລະ ຫຼຸດການອ່ານຜິດ ໂດຍສະເພາະຄໍາສັບທີ່ມີຮູບຄໍາຄ້າຍຄືກັນ Kilpatrick (2015)

5) ຄໍາທີ່ບໍ່ເປັນໄປຕາມກົດ (Tricky Words): ເປັນການອ່ານອອກສຽງຄໍາສັບທີ່ບໍ່ສາມາດອອກສຽງໄດ້ຕາມຫຼັກການອ່ານຂອງໂຟນິກ ຜົນການສຶກສາຂອງສະແດງໃຫແເຫັນວ່າ ນັກຮຽນສາມາດອ່ານ Tricky words ໄດ້ດີຂຶ້ນ ເນື່ອງຈາກການສອນໂຟນິກຊ່ວຍໃຫ້ນັກຮຽນເຂົ້າໃຈວ່າ ບາງຄໍາສັບບໍ່ສາມາດອ່ານຕາມຫຼັກໂຟນິກໄດ້ທັງໝົດ ແຕ່ຈໍາເປັນຕ້ອງຈື່ຈໍາເປັນຄໍາ ຈຶ່ງຊ່ວຍເສີມສ້າງຄວາມແມ່ນຍໍາໃນການອ່ານ ເຊິ່ງຜົນການສຶກສານີ້ສອດຄ່ອງກັບຜົນການຄົ້ນຄວ້າຂອງ Futrakul (2022) ແລະ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Yaidee (2022) ພົບວ່າ ການອ່ານອອກສຽງແບບໂຟນິກຂອງນັກຮຽນຊັ້ນປະຖົມສຶກສາປີທີ 4 ເປັນສື່ການຮຽນຮູ້ທີ່ມີປະສິດທິພາບທີ່ສາມາດພັດທະນາທັກສະການອ່ານອອກສຽງຄໍາສັບພາສາອັງກິດໄດ້ ເຮັດໃຫ້ການຈັດການຮຽນຮູ້ປະສົບຜົນສໍາເລັດ ແລະ ສົ່ງຜົນໃຫ້ຜູ້ຮຽນສາມາດພັດທະນາທັກສະການອ່ານອອກສຽງຄໍາສັບພາສາອັງກິດຂອງຕົນໄດ້ຢ່າງມີປະສິດທິພາບ.

## 5. ສະຫຼຸບ

ຜົນການຄົ້ນຄວ້າຄັ້ງນີ້ໂດຍພາບລວມການນໍາໃຊ້ວິທີສອນແບບໂຟນິກເຂົ້າໃນການຈັດການຮຽນການສອນການອ່ານອອກສຽງຄໍາສັບພາສາອັງກິດສາມາດສົ່ງເສີມໃຫ້ນັກຮຽນມີຄວາມສາມາດໃນການອ່ານອອກສຽງຄໍາສັບ

ພາສາອັງກິດ ເມື່ອປຽບທຽບໃສ່ເກນແມ່ນມີຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດຢູ່ໃນລະດັບເກັ່ງ ເຊິ່ງສະແດງໃຫ້ເຫັນວ່າ ນັກຮຽນມີຄວາມພັດທະນາທາງການຮຽນດີຂຶ້ນເມື່ອໄດ້ຮຽນຮູ້ແບບໂຟນິກ.

ຈາກຜົນການຄົ້ນຄ້ວາຂ້າງເທິງນັ້ນ ຜູ້ຄົ້ນຄວ້າໄດ້ມີຂໍ້ສະເໜີລາຍລະອຽດ ດັ່ງນີ້:

1) ສຳລັບການນຳໄປໃຊ້

ການນຳໃຊ້ວິທີສອນແບບໂຟນິກ (Phonics Methods) ຄູຜູ້ສອນຄວນຕິດຕາມນັກຮຽນຢ່າງໃກ້ຊິດໃນຂະນະທີ່ຈັດການສອນໂດຍໃຊ້ແຜນການຈັດການຮຽນຮູ້ໂດຍໃຊ້ວິທີໂຟນິກນີ້ ຕ້ອງຄອຍແນະນຳ, ຊ່ວຍເຫຼືອ, ແກ້ໄຂບັນຫາທີ່ເກີດຂຶ້ນລະຫວ່າງຮຽນ ຕ້ອງສັງເກດພຶດຕິກຳຂອງຜູ້ຮຽນ ບັນທຶກຄວາມກ້າວໜ້າໄປພ້ອມວ່າຜູ້ຮຽນຮຽນຮອດໃສ ເຂົ້າໃຈຫຼືບໍ່ ແລະ ການຈັດກິດຈະກຳນີ້ມີຜົນເປັນແນວໃດ ພັດທະນາຂຶ້ນຫຼືບໍ່ ແລະ ຜູ້ສອນຄວນກະຕຸ້ນໃຫ້ນັກຮຽນມີປະຕິສຳພັນທີ່ດີຕໍ່ກັນ ສ້າງບັນຍາກາດໃນຫ້ອງຮຽນໃຫ້ເປັນກັນເອງ ໃຫ້ນັກຮຽນເກີດຄວາມສະບາຍໃຈ ກ້າສະແດງເຫດຜົນເມື່ອຕ້ອງຕອບຄຳຖາມ ຫຼື ຕ້ອງສະແດງຄວາມຄິດເຫັນ.

2) ສຳລັບການວິໄຈໃນຄັ້ງຕໍ່ໄປ

ຄວນມີການນຳເອົາຂະບວນການສອນແບບໂຟນິກໄປສອນໃນລະດັບຂັ້ນອື່ນ ໂດຍອາດຈະເລີ່ມລະດັບຊັ້ນປະຖົມສຶກສາ ປີທີ 1 ເພື່ອເປັນການເລີ່ມຈາກການເສີມສ້າງພື້ນຖານຄວາມຮູ້ ແລະ ສຳຫຼວດເຖິງການສິ່ງຜົນໃນລະດັບຊັ້ນອື່ນໆ ແລະ ມີການສຶກສາປຽບທຽບການຈັດການຮຽນ-ການສອນຕາມຮູບແບບການສອນໂຟນິກ ກັບວິທີສອນແບບອື່ນໆ ວ່າຈະສົ່ງຜົນແນວໃດຕໍ່ກັບການອ່ານອອກສຽງຄຳສັບພາສາອັງກິດ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ . (2015). ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ໄລຍະ 2 (2011-2015). ນະຄອນຫຼວງວຽງຈັນ: ບໍລິສັດວິສະຫະກິດໂຮງພິມສຶກສາ.

Adam, M. J. (1990). *Begining to read.* MIT Press. https://doi.org/https://cpin.us/sites/default/files/fcab_resources/fcab_res_langlit/fcab_ll_bg/Beginning_To_Read.pdf

Ahmad, Z., & Yunas, M. (2019). The effectiveness of using Jolly Phonics blending phonemes to Year 3 English language classroom. *International Journal of Humanities, Philosophy and Language, 2*(8), 150–162. https://doi.org/https://scispace.com/pdf/the-effectiveness-of-using-jolly-phonics-blending-phonemes-cjojl4yd9q.pdf?

anyaphet, K. (2019). Developing English reading and pronunciation skills using a phonics activity kit for third-grade elementary school students. Bangkok: Silpakorn Univerity.

Biru, N., Suksang, S., & Tangrujikul, T. (2024). Development of English vocabulary pronunciation skills using phonics reading exercises for 4th grade elementary school students. *Fatoni University Academic Journal, 8*(1), 59-68. https://doi.org/https://share.google/JfNUelU2xxo1RNrQS

Buckingham, J. (2020). *Reading Instruction in Australia: Findings from the Past Decade.*

Campbell, D., & Stanley, J. (1963). *Experimental and Quasi-Experimental Designs for Research.* Houghton Mifflin. https://doi.org/https://www.sfu.ca/~palys/Campbell&Stanley-1959-

Exptl&QuasiExptlDesignsForResearch.pdf
Chaichit, A. (2020). Development of English reading skills using Phonics exwecises for scong grade students. *Journal of Academic Research, Suratthani Rajabhat University, 17*(1), 149-160.
Ehri, L. (2005). Learning to Read Words: Theory, Findings, and Issues. *Scientific Studies of Reading, 9*(2), 167–188. https://doi.org/https://doi.org/10.1207/s1532799xssr0902_4
Futrakul, K. (2022). Developing English Listening And Pronunciation Skills Through Synthetic Phonics Teaching Principles Using JOLLY Phonics Teaching Approach. *Valaya Alongkorn Review (Humanities and Social Science), 12*(3).
Grabe, W., & Stoller, F. (2019). *Teaching and researching reading (3rd ed.).* United Kingdom: Routledge.
Kilpatrick, D. (2015). *Essentials of Assessing, Preventing, and Overcoming Reading Difficulties.* Wiley. https://doi.org/https://content.e-bookshelf.de/media/reading/L-3842576-713065b66a.pdf
Krejcie, R., & Morgan, D. (1970). *Determining Sample size for research.* Sage Journal.
Kritima, J., & Jittra, W. (2019). *Developing English reading and pronunciation skills using a phonics activity kit for third-grade elementary school students.* Bangkok: Silpakorn University.
Mailiang, C., Phosena, K., & Xaypanya, V. (2019). Effects of phonics instruction on reading fluency and vocabulary retention of fifth-grade primary students in Laos. *Journal of Language Education and Literacy, 4*(1), 78-89. https://doi.org/https://doi.org/10.5678/jlel.v4i1.2019
National Reading Panel. (2000). *Teaching Children to Read: An Evidence-Based Assessment of the Scientific Research Literature on Reading and Its Implications for Reading Instruction.* National Institute of Child Health and Human Development. https://doi.org/https://www1.nichd.nih.gov/publications/pubs/nrp/documents/report.pdf
Niyomphan, P. (2023). Using Phonics Method to promote English Pronunciation skills of third grade stusents. *Journal of Academic Research, Rajamangala University of Technology Phra Nakhon, 17*(1), 177-189.
Panmanivong, T. (2020). An Exploration of teaching strategies and methods that contribute to successful outcomes and bring positive change when Englsih is taught as a foreign Language at tertiary level in Laos. *Souphanouvong Journal od Multidisciplinary Research and Development, 6*(1), 144-153. https://doi.org/https://www.su-journal.com/index.php/su/article/view/250/242
Panyarat, T. (2025). Guidelines for curriculum management aand teaching of English phonics at Pratulee Municipal School, Lamphun Province. *The Teacher CFouncil of Thailand, Journal of Teacher Profesional Development*, 95.
Saiyod. L., & Saiyod. A. (2010). *Educational research techniques. (11th ed).* Bangkok: Suweeriyasan.

Souriyamonthol, N., Atipatthanan, N., & Saengsin, N. (2018). Phonics teaching to promote pronunciation and English vocabulary knowledge of first grade students. *Nakhon Phanom University, 8*(2), 117-124. https://doi.org/https://so03.tci-thaijo.org/index.php/npuj/issue/view/11106

Souriyavongsa, T., rany, S., Abidin, M., & Mei, L. (2013). Factors Causes Students Low English Language Learning: A Case Study in the National University of Laos. *International Journal of English Language Education, 1*(1), 179-192. https://doi.org/https://doi.org/10.5296/ijele.v1i1.3100

Srisat, B. (2017). *Preliminary research, (10 th edition).* Bangkok: Suwiriyasan Company Limited.

Trujillo-Ramos, L.-A. (2025). Phonics is Phondamental to Literacy Acquisition: An Examination of theImpact of Systematic Phonics-Based Instruction and Whole-Language Approaches. *Scientific Research An Academic Publisher, 16*(8), 1184-1212.

Wongsothorn, A. (2020). Using Phonics activities to develop the ability of second-grade elementary school student to pronounce English vocabulary. *Burirum Rajabphat University Academic Journal, 12*(2), 143-152.

Xaypanya, V., Ismail, S., & Low, H. (2017). Demotivation Experienced by English as Foreign Language (EFL) Learners in the Lao PDR. *The Asia-Pacific Education Researcher, 26*(6), 361-368. https://doi.org/https://doi.org/10.1007/s40299-017-0355-0

Yaidee, R. (2022). The reading aloud skill development by using phonics exercises of grade 4 students at Bannontarod School, Kamphaengphet province. *Journal of Rajabhat University of Sisaket, 16*(1), 11-20. https://doi.org/https://nuir.lib.nu.ac.th/dspace/bitstream/123456789/5504/3/RatchadakanYaidee.pdf

ຕາຕະລາງ 1: ຜົນການປະເມີນຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດ ສຳລັບນັກຮຽນຊັ້ນປະຖົມສຶກສາ ປີທີ 5

| ຂັ້ນຕອນການອ່ານອອກສຽງຄຳສັບພາສາອັງກິດ | ການທົດສອບຄັ້ງທີ | | | | | | | ສະເລ່ຍ | ແປຄວາມໝາຍ |
|---|---|---|---|---|---|---|---|---|---|
| | 1 | 2 | 3 | 4 | 5 | 6 | 7 | | ຄວາມສາມາດ |
| ຂັ້ນທີ1 ຮຽນຮູ້ສຽງພະຍັນຊະນະ (Leaning the letter sounds) | 2.40 | 2.56 | 2.48 | 2.68 | 2.86 | 3.19 | 3.38 | 2.79 | ເກັ່ງ |
| ຂັ້ນທີ2 ຮຽນຮູ້ກ່ຽວກັບຕົວອັກສອນ (Learning the letter Information) | 3.00 | 2.75 | 3.20 | 2.85 | 3.85 | 3.68 | 3.50 | 3.26 | ເກັ່ງຫຼາຍ |
| ຂັ້ນທີ3 ການປະສົມຄຳ (Blending) | 2.57 | 2.60 | 2.62 | 2,85 | 2.76 | 2.95 | 3.00 | 2.75 | ເກັ່ງ |
| ຂັ້ນທີ4 ແຍກສຽງຄຳ (Identifying the sounds in words) | 3.10 | 3.54 | 3.70 | 3.20 | 3.20 | 3.35 | 3.55 | 3.38 | ເກັ່ງຫຼາຍ |
| ຂັ້ນທີ5 ຄຳທີ່ບໍ່ເປັນໄປຕາມກົດ (Tricky Words) | 2.98 | 3.10 | 3.00 | 2.70 | 3.45 | 3.37 | 3.40 | 3.14 | ເກັ່ງ |
| **ສະເລ່ຍ** | 2.81 | 2.91 | 3.00 | 2.86 | 3.22 | 3.31 | 3.37 | 3.06 | ເກັ່ງ |
| **S.D** | 0.31 | 0.41 | 0.49 | 1.29 | 0.44 | 0.27 | 0.22 | 0.28 | |

ຕາຕະລາງ 2: ຜົນການປະເມີນເປັນລາຍດ້ານຄວາມສາມາດໃນການອ່ານອອກສຽງຄຳສັບພາສາອັງກິດ ສຳລັບນັກຮຽນຊັ້ນປະຖົມສຶກສາ ປີທີ 5

| ລ/ດ | ຂັ້ນຕອນການແກ້ບັນຫາ | $\bar{X}$ | SD | ການແປຜົນ |
|---|---|---|---|---|
| 1 | ຮຽນຮູ້ສຽງພະຍັນຊະນະ | 2.79 | 0.37 | ເກັ່ງ |
| 2 | ຮຽນຮູ້ກ່ຽວກັບຕົວອັກສອນ | 3.26 | 0.42 | ເກັ່ງຫຼາຍ |
| 3 | ການປະສົມຄຳ | 2.75 | 1.05 | ເກັ່ງ |
| 4 | ແຍກສຽງຄຳ | 3.38 | 0.22 | ເກັ່ງຫຼາຍ |
| 5 | ຄຳທີ່ບໍ່ເປັນໄປຕາມກົດ | 3.14 | 0.27 | ເກັ່ງຫຼາຍ |
| | | 3.06 | 0.28 | ເກັ່ງ |

ຕາຕະລາງ 3: ຜົນການປະເມີນຄ່າສະເລ່ຍການທົດສອບຈຳນວນ 7 ຄັ້ງ

| ການທົດສອບຄັ້ງທີ | ຈຳນວນຂໍ້ | $\bar{X}$ | SD |
|---|---|---|---|
| ທົດສອບຄັ້ງທີ 1 | 5 | 2.81 | 0.30610 |
| ທົດສອບຄັ້ງທີ 2 | 5 | 2.91 | 0.41146 |
| ທົດສອບຄັ້ງທີ 3 | 5 | 3.00 | 0.48600 |
| ທົດສອບຄັ້ງທີ 4 | 5 | 2.86 | 1.29479 |
| ທົດສອບຄັ້ງທີ 5 | 5 | 3.22 | 0.44478 |
| ທົດສອບຄັ້ງທີ 6 | 5 | 3.31 | 0.26743 |
| ທົດສອບຄັ້ງທີ 7 | 5 | 3.37 | 0.21629 |
| ສະເລ່ຍ | 5 | 3.06 | 0.28079 |




ຮູບທີ 1: ປຽບທຽບລະດັບຄວາມສາມາດໃນການອ່ານອອກສຽງຄໍາສັບພາສາອັງກິດໃນແຕ່ລະຄັ້ງຂອ